ກະຊວງວິທະຍາສາດແລະເຕັກໂນໂລຊີ
ສາລະບັນ
ເລກທີ...0859...ກວຕ
ລົງວັນທີ...08 MAY 2014...
ເວລາ...
ສົ່ງເຖິງ...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ນາຍົກລັດຖະມົນຕີ ເລກທີ 165 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 7-5-2014

# ດຳລັດ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍ ການຮັບຮອງ ແລະ ປະກາດນຳໃຊ້ນະໂຍບາຍແຫ່ງຊາດ ກ່ຽວກັບວຽກງານເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່

- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ມັງກອນ 2014 ສະບັບເລກທີ 01/ລບ, ລົງວັນທີ 29 ມັງກອນ 2014.
- ອີງຕາມ ເອກະສານສະເໜີຂອງກະຊວງສາທາລະນະສຸກ ສະບັບເລກທີ 256/ສທ, ລົງວັນທີ 24 ກຸມພາ 2014.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍ ວຽກງານເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່.

ມາດຕາ 2: ມອບໃຫ້ກະຊວງສາທາລະນະສຸກ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດດັ່ງກ່າວໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ລັດຖະບານຊາບ ແຕ່ລະໄລຍະ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດ ສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ